# ໂຮງຮຽນວັນອາທິດ

**ວັນອາທິດ ທີ 8** ພິສະຈິກາ **2009 (11-8-2009)**

---

**ຊົມຊື່ນຍິນດີກັບການທົດລອງ**

**ຂໍ້ພຣະຄັມພີໃນບົດຮຽນ:** ຢາໂກໂບ 1:2-18

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ກ້າທີ່ຈະປະເຊີນໜ້າກັບເຄາະຮ້າຍທີ່ເກີດຂຶ້ນໃນຊີວິດຂອງທ່ານ. ທ່ານຈະຮູ້ໄດ້ວ່າພຣະເຈົ້າເປັນຜູ້ທຳງານໃນຊີວິດຂອງທ່ານ ໃນຂະນະທີ່ທ່ານຕົກຢູ່ໃນຖ້າມກາງການທົດລອງ ແລະຍັງຈະເປັນການທ້າທາຍໃນການຕອບໂຕ້ກັບເຄາະຮ້າຍນັ້ນດ້ວຍການຝຶກຫັດຄວາມເຊື່ອຂອງທ່ານໃນພຣະເຈົ້າແລະຊອກຫາສະຕິປັນຍາຈາກພຣະອົງ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ບົດຮຽນນີ້ແມ່ນກ່ຽວກັບການປະເຊີນໜ້າກັບການທົດລອງໃນຊີວິດ. ໃນເວລາທີ່ຖືກເຄາະຮ້າຍ, ຄຣິສຕຽນຄວນມີຄວາມປິຕິຍິນດີຢູ່ໃນຄວາມດີຂອງພຣະເຈົ້າແລະເຕັມໄປດ້ວຍຄວາມເຊື່ອໝັ້ນໃຈ ກັບສິ່ງທີ່ຈະປາກົດຂຶ້ນພາຍຫຼັງການທົດລອງ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:**

ບົດຮຽນນີ້ມີຄວາມສຳຄັນກໍເນື່ອງຈາກວ່າການທົດລອງແມ່ນພາກສ່ວນນຶ່ງຂອງຊີວິດແລະບໍ່ແມ່ນວ່າປະສົບການນີ້ຈະຫຍຸ້ງຍາກເກີນກວ່າທີ່ເຮົາຈະທົນໄດ້.ເຖິງຢ່າງໃດກໍຕາມ, ສັງເກດເບິ່ງບັນຫາການທົດລອງຂອງເຮົາເຂົ້າໃສ່ກັບພຣະຄຳຂອງພຣະເຈົ້າເຖິງຄວາມຈິງທີ່ຕ້ອງເຮັດໃຫ້ເຮົາເກີດມີຄວາມຊື່ນຊົມຍິນດີ.

ໃນແຕ່ລະມື້ທີ່ຂ້າພຣະເຈົ້າໄດ້ຂຽນບົດຮຽນນີ້, ພໍ່ຂອງຂ້າພຣະເຈົ້ານອນຢູ່ທີ່ໂຮງພະຍາບານດ້ວຍໂຣກຫົວໃຈແລະແມ່ຂອງພັນລະຍາຂອງຂ້າພຣະເຈົ້າກໍໄດ້ຢູ່ໃນໂຮງພະຍາບານທີ່ມິດຊິດຊີປີ ດ້ວຍໂຣກປອດອັກເສບ. ພັນລະຍາແລະຂ້າພຣະເຈົ້າໃຫ້ຄວາມໄວ້ວາງໃຈ ໃຫ້ຄວາມໃກ້ຊິດນຳພວກເພິ່ນດ້ວຍວິທີການໃຊ້ໂທຣະສັບຈາກບ້ານພັກຂອງພວກຂ້າພຣະເຈົ້າທີ່ຣັດຈໍເຈັຽ, ພວກຂ້າພະເຈົ້າບໍ່ມີຄວາມສາມາດຢູ່ນຳພວກເພິ່ນໄດ້ແຕ່ລະຄືນ, ທ່ານຈະມີປະຕິກິຣິຍາຕອບໂຕ້ແນວໃດເມື່ອທ່ານມີບັນຫາທີ່ເກີດຂຶ້ນຢ່າງນີ້? ບົດຮຽນພາຍໃນອາທິດນີ້ໄດ້ໃຫ້ຄວາມປລາດໃຈແລະຊູກຳລັງໃຈເຮົາໃນຄຳຕອບ.

## ສຶກສາພຣະຄັມພີ

**1.ມີເຫດຜົນທີ່ຈະມີຄວາມຊົມຊື່ນຍິນດີ:** ຢາໂກໂບ 1:2-4

ທ່ານຢາໂກໂບເວົ້າວ່າ ຈົ່ງຖືວ່າເປັນເຣື່ອງທີ່ໜ້າຊົມຊື່ນຍິນດີເມື່ອຄຣິສຕຽນເຮົາປະສົບກັບບັນຫາ. ບົດເພງສັນລະເສີນເປັນກຳລັງໃຈໃຫ້ກັບຜູ້ທີ່ເຊື່ອ "ໄວ້ວາງໃຈໃນຄຳອະທິຖານຂອງທ່ານ" ທ່ານຢາໂກໂບຂໍຮ້ອງໃຫ້ພວກເຮົາເພີ້ມເຕີມຄວາມເຊື່ອແລະໄວ້ວາງໃຈກັບການທົດລອງນາໆປະການດ້ວຍຄວາມຊົມຊື່ນຍິນດີ. ໃນພາສາກຣີດຄຳທີ່ອະທິບາຍ

ຄ້າຍຄືການທົດລອງຫຼືການລໍ້ລວງ. ນີ້ແມ່ນຄຳເວົ້າວ່າ ການທົດລອງແມ່ນອ້າງອີງເຖິງການທົດສອບຈາກພາຍນອກ, ບໍ່ແມ່ນການລໍ້ລວງທີ່ເກີດອອກມາຈາກພາຍໃນຈິດໃຈ. ທ່ານຢາໂກໂບຮູ້ວ່າຖ້າພວກເຮົາມີຄວາມຊົມຊື່ນຍິນດີກັບການທົດລອງຂອງພວກເຮົາ ມັນຈະເຮັດໃຫ້ເຮົາມີຄວາມແຕກຕ່າງ. ດ້ວຍເຫດໃດ?

ອັນທີນຶ່ງ, ພວກເຮົາມີຄວາມປິຕິຍິນດີໃນການທົດລອງຂອງພວກເຮົາເນື່ອງຈາກວ່າການທົດລອງເປັນການສະແດງໃຫ້ເຫັນເຖິງຄວາມເຊື່ອ. ໃນຂໍ້ 3.ທ່ານຢາໂກໂບໄດ້ເນັ້ນໜັກເຖິງການກວດສອບເບິ່ງຄວາມເຊື່ອຂອງເຮົາ. ຄວາມເຊື່ອຂອງທ່ານຄ້າຍຄືກັບວັດຖຸສິ່ງຂອງສິ້ນນຶ່ງທີ່ຢູ່ຂ້າງໃນກວດ. ທ່ານອາດຈະທາສີກວດນັ້ນໃຫ້ສວຍສົດງົດງາມທາງດ້ານນອກ. ແຕ່ວ່າເມື່ອທ່ານທຸບຂວດໃຫ້ມັນແຕກ, ຢ່າງໃດກໍຕາມທຸກໆສິ່ງທີ່ຢູ່ຂ້າງໃນກໍຈະອອກມາ.

ອັນທີສອງ ພວກເຮົາມີຄວາມປິຕິຍິນດີໃນການທົດລອງຂອງພວກເຮົາເນື່ອງຈາກວ່າການທົດລອງໄດ້ສອນເຮົາໃຫ້ມີຄວາມອົດກັ້ນ. ຄຳທີ່ວ່າອົດກັ້ນແທ້ຈິງມີຄວາມໝາຍວ່າຍອມຢູ່ພາຍໃຕ້ແນວຄິດນີ້ບໍ່ໄດ້ໝາຍວ່າຍອມຢູ່ໃຕ້ອິດທິພົນຂອງຜູ້ໃດຜູ້ນຶ່ງ; ແຕ່ໝາຍເຖິງການຍຸດຕິ. ປະທານາທິບໍດີ ອັບຣາຮາມ ລິນຄອນ ເສັຽໃນການແຂ່ງຂັນຫຼາຍຄັ້ງທ່ານກໍຍັງສືບຕໍ່ລົງສມັກແຂ່ງຂັນຈົນກະທັ່ງທ່ານໄດ້ຖືກເລືອກຕັ້ງເປັນປະທານາທິບໍດີ. ທ່ານໄດ້ຖອດຖອນເອົາບົດຮຽນຈາກບົດຮຽນທີ່ຜ່ານມາຂອງທ່ານດ້ວຍຄວາມອົດສາພະຍາຍາມ, ໃນລະຫວ່າງນີ້ທີ່ຂາດຄວາມຫວັງຂອງສົງຄາມກາງເມືອງຂອງສະຫະຣັດອະເມຣິກາ. ອັນທີສາມ, ພວກເຮົາຊົມຊື່ນຍິນດີໃນການທົດລອງເນື່ອງຈາກວ່າການທົດລອງໄດ້ເຮັດໃຫ້ເຮົາໄດ້ຈະເຣີນເຕີບໃຫຍ່ຂຶ້ນ. ໃນຂໍ້ສີ່ໄດ້ເວົ້າວ່າໝາກຜົນຂອງຄວາມອົດທົນແມ່ນເຮັດໃຫ້ທ່ານເປັນຜູ້ທີ່ຈະເຣີນຂຶ້ນແລະມີຄວາມສົມບູນຢ່າງເຕັມສ່ວນ, ບໍ່ຂາດເຫຼືອສິ່ງໃດ. ມີບຸກຄົນທີ່ມີຊື່ສຽງຫຼາຍໆທ່ານໄດ້ທວນຄືນເບິ່ງການທົດລອງຂອງເຂົາແລະຍອມຮັບວ່າການທົດລອງເຫຼົ່ານັ້ນເປັນວິທີການດຳລົງຊີວິດທີ່ນຳເຂົາໃຫ້ກາຍເປັນແບບຢ່າງໃຫ້ກັບຫຼາຍຄົນໃນສມັຍທຸກມື້ນີ້.

## 2. **ຂໍອກຫາສະຕິປັນຍາທີ່ມາຈາກພຣະເຈົ້າ**. ຢາໂກໂບ 1:5-11)

ຍົກເອົາຂໍ້ຄວາມທີ່ວ່າ "ບໍ່ຂາດເຂີນສິ່ງໃດໝົດ" ໃນຂໍ້ທີ 4, ຢາໂກໂບໄດ້ເວົ້າວ່າ**ດຽວນີ້ຖ້າວ່າເຮົາຜູ້ໃດຜູ້ນຶ່ງຂາດສະຕິປັນຍາກໍຂໍໃຫ້ເຮົາອ້ອນວອນຂໍຕໍ່ພຣະເຈົ້າ**. ພຣະສະຕິປັນຍາທີ່ຢູ່ໃນພຣະຄຳພີເປັນທາງອອກໃຫ້ເຮົາຕລອດເວລາແລະເປັນພຣະວິນຍານທີ່ຊົງນຳ: "ຄວາມຢຳເກງພຣະເຈົ້າຈະເປັນບໍ່ເກີດຂອງສະຕິປັນຍາທີ່ມາຈາກພຣະເຈົ້າ" (ສຸພາສິດ 9:10) ເຈົ້າຊີວິດໂຊໂລໂມນໄດ້ປະເຊີນກັບການແກ້ໄຂບັນຫາໃຫ້ກັບຜູ້ຍິງສອງຄົນຕ່າງອ້າງວ່າມີລູກນ້ອຍເປັນຄົນໆດຽວກັນ. ພຣະອົງໄດ້ສັ່ງໃຫ້ຕັດເດັກນ້ອຍນັ້ນເປັນສອງທ່ອນ, ພຣະອົງຮູ້ວ່າຜູ້ທີ່ເປັນແມ່ແທ້ໆຍ່ອມຈະຮ້ອງຂໍໃຫ້ໄວ້ຊີວິດແກ່ເດັກນ້ອຍນັ້ນ. ເມື່ອຜູ້ເປັນແມ່ໄດ້ຂໍຮ້ອງໃຫ້ໄວ້ຊີວິດແກ່ເດັກນັ້ນ, ພຣະອົງຊົງສັ່ງໃຫ້ຍຸດໃນການທີ່ຈະຕັດເດັກນ້ອຍອອກເປັນສອງທ່ອນແລະຄືນເດັກນ້ອຍນັ້ນໃຫ້ກັບແມ່ທີ່ແທ້ຈິງ (1ກະສັດ 3)

ເຮັດຢ່າງໃດເຮົາຈິ່ງຈະໄດ້ສະຕິປັນຍາຢ່າງນັ້ນ? ກ່ອນອື່ນໝົດ, ອ້ອນວອນອະທິຖານເພື່ອໃຫ້ມີສະຕິປັນຍາ. ພວກເຮົາສົມຄວນທີ່ຈະຮ້ອງຂໍຕໍ່ພຣະເຈົ້າ ຢາໂກໂບເວົ້າວ່າພຣະເຈົ້າຕ້ອງການໃຫ້ສະຕິປັນຍາກັບເຮົາທຸກຄົນ. ພຣະອົງມີໃຈກວ້າງຂວາງທີ່ຈະໃຫ້ສະຕິປັນຍາກັບທຸກຄົນແລະບໍ່ໄດ້ຕິຕຽນ. ພຣະເຈົ້າບໍ່ໄດ້ຕຳໜິພວກເຮົາໃນການທີ່ພວກເຮົາຮ້ອງຂໍສະຕິປັນຍານຳພຣະອົງ. ເປັນເວລາ 30 ປີຊີວິດຮັບໃຊ້ເປັນສິດຍາພິບານຂ້າພຣະເຈົ້າໄດ້ອ້ອນວອນອະທິຖານຂໍສະຕິປັນຍາຫຼາຍກ່າວສິ່ງອື່ນໃນພຣະຄັມພີ.ແລະຂ້າພຣະເຈົ້າກໍເຫັນວ່າໄດ້ຄຳຕອບໃນທຸກໆຄັ້ງ. ອັນທີສອງ, ຮ້ອງຂໍໃຫ້ມີຄວາມເຊື່ອໂດຍປາສຈາກຂໍ້ສົງສັຍ. ນີ້ແມ່ນຄຸນສົມບັດໃນຄຳໝັ້ນສັນຍາ ຖ້າພວກເຮົາຮ້ອງຂໍເພື່ອໃຫ້ມີສະຕິປັນຍາແຕ່ບໍ່ມີຄວາມເຊື່ອພວກເຮົາກໍຈະບໍ່ໄດ້ອັນໃດເລີຍ. ຢາໂກໂບເຫັນລົມພັດຄື້ນນໍ້າທະເລຄາລີເລ ແລະທ່ານເວົ້າວ່າຄົນທີ່ມີຂໍ້ສົງໃສກໍຄືຄົນທີ່ຖືກລົມພັດໄປພັດມາ. ໃນຂໍ້ 7 ໄດ້ເຕືອນວ່າບຸກຄົນນັ້ນຈະບໍ່ໄດ້ຮັບສິ່ງໃດຈາກພຣະເຈົ້າ. ເພື່ອບໍ່ເຮັດໃຫ້ທ່ານໝົດກຳລັງໃຈໃນຖ້ອຍຄຳນີ້ຈິ່ງຈຳວ່າຕົວທ່ານຢາໂກໂບເອງກໍມີຂໍ້ສົງສັຍໃນອ້າຍຂອງລາວ-ພຣະເຢຊູຄຣິດ (ໂຢຮັນ 7:5). ເປັນທີ່ຍອມຮັບດ້ວຍຄວາມສັດຊື່ມັນແມ່ນຂໍ້ສົງສັຍແລະຄຳຖາມ. ຊາຍຄົນນຶ່ງບອກກັບພຣະເຢຊູວ່າ"

ເຊື່ອແລ້ວ! ທີ່ຂ້ານ້ອຍຍັງຂາດຄວາມເຊື່ອນັ້ນ ຊ່ອຍຂ້ານ້ອຍແດ່(ມາຣະໂກ9:24) ເຖິງຢ່າງໃດກໍ່ຕາມ, ມັນກໍບໍ່ເປັນທີ່ຍອມຮັບໃນຂໍ້ສົງສັຍເໝືອນດັ່ງຊາຍຄົນນີ້ທີ່ບໍ່ມີການຕັດສິນໃຈຢ່າງເດັດຂາດ. ຄຳເວົ້ານີ້ໝາຍຄວາມວ່າ "ບໍ່ມີສະຕິປັນຍາ" ບຸກຄົນທີ່ບໍ່ມີການຕັດສິນໃຈຢ່າງເດັດຂາດດ້ວຍຕົນເອງກໍຄືຄົນທີ່ຍ່າງເຂົ້າມາໃນທາງແຍກແລ້ວກໍຢືນງຶງຢູ່ທີ່ນັ້ນບໍ່ຮູ້ຈະຕັດສິນໃຈວ່າຈະຍ່າງໄປທາງໃດ. ຫົວຂໍ້ໃນບົດຮຽນ ຈຶ່ງຊົມຊື່ນຍິນດີກັບການທົດລອງ (ຂໍ້ 2-4) ແລະຊອກຫາສະຕິປັນຍາ(ຂໍ້5-9) ຮ່ວມເຂົ້າກັນໃນຄຳໝັ້ນສັນຍາຂອງຄວາມບໍ່ສົມບູນໃນຂໍ້ 9. ຢາໂກໂບໃຊ້ຄວາມຂັດສົນໂດຍສະເພາະການຍົກຕົວຢ່າງຂອງການຫັນປ່ຽນການທົດລອງໃຫ້ກາຍມາເປັນຄວາມຊົມຊື່ນຍິນດີ. ຢາໂກໂບເວົ້າວ່າ ໃຫ້ພີ່ນ້ອງທີ່ຕ່ຳຕ້ອຍຈົ່ງອວດອ້າງໃນການທີ່ພຣະເຈົ້າຊົງຍົກຍໍຕົວຂຶ້ນ ກໍດີກວ່າການທີ່ຈະມີຄວາມຮູ້ສຶກຢ່າງຕ່ຳຕ້ອຍ. ຢາໂກໂບໄດ້ເວົ້າຢູ່ເລື້ອຍເຖິງຄວາມແຕກຕ່າງໃນລະຫວ່າງຄົນຮັ່ງມີແລະຄົນຍາກຈົນ. ເມື່ອຢາໂກໂບເວົ້າເຊັ່ນນັ້ນກໍເຮັດໃຫ້ບຸກຄົນນຶ່ງຜູ້ທີ່ຖືວ່າເປັນຄົນຮັ່ງມີໄດ້ຮັບການອັບອາຍຂາຍໜ້າ, ທ່ານເວົ້າດ້ວຍຖ້ອຍຄຳທີ່ລະອຽດອ່ອນເມື່ອໄດ້ຍິນໄດ້ຟັງແລ້ວກໍເກີດການລະອາຍໃນໃຈ. ທ່ານໄດ້ໝາຍຄວາມວ່າບຸກຄົນຜູ້ຮັ່ງມີຈະບໍ່ສົມຄວນຈະໄດ້ຮັບກຽດ. ຄວາມຮັ່ງມີກໍເປັນອຸປະສັກອັນນຶ່ງທີ່ຂັດຂວາງເຮົາຕໍ່ຄວາມຮູ້ສຶກຂອງຄວາມຕ້ອງການຂອງຄວາມລອດພົ້ນ.

ວັນນຶ່ງຂ້າພະເຈົ້າໄດ້ໄປປ່າວປະກາດພຣະທັມຄຳສອນຂອງອົງພຣະເຢຊູຄຣິສດ້ວຍວິທີການເຄາະປະຕູໄປແຕ່ລະເຮືອນໃນເຂດໝູ່ບ້ານທີ່ໃຫຍ່ໆ ງາມໆ ແລະຣາຄາແພງໆ, ແລະໃນແຕ່ລະຫຼັງຄາເຮືອນຂ້າພະເຈົ້າໄດ້ຮັບການຕ້ອນຮັບແບບເມີນເສີຍ. ເປັນດັ່ງນັ້ນ, ຂ້າພຣະເຈົ້ານຳເອົາຄະນະປ່າວປະກາດພຣະທັມຍາຍອອກຈາກທີ່ນັ້ນຫ່າງກັນປະມານນຶ່ງໄມລ໌ໃນຖະນົນເສັ້ນດຽວກັນແລະເຊົ່າບ້ານຢູ່ທີ່ນັ້ນເປັນເຮືອນແຝດທີ່ມີຣາຄາຄ່າເຊົ່າຖືກ. ຢູ່ທີ່ນັ້ນພວກເຮົາໄດ້ຮັບຫຼາຍຢ່າງທີ່ມີຄວາມແຕກຕ່າງທັງໜ້າປະທັບໃຈ. ໄດ້ມີຜູ້ຄົນທີ່ຢູ່ໃນທີ່ນັ້ນເຂົ້າມາເວົ້າລົມຢ່າງເປັນກັນເອງແລະເຂົາເຫຼົ່ານັ້ນກໍເປີດໂອກາດໃຫ້ຮູ້ເຖິງຄວາມເຊື່ອຂອງພວກເຂົາ. ຢາໂກໂບໄດ້ປຽບທຽບຄົນຮັ່ງມີເໝືອນດອກຫຍ້າໃນທົ່ງ ເມື່ອຕາເວັນຂຶ້ນແສງແດດກໍຮ້ອນກ້າກໍເຮັດໃຫ້ດອກຫຍ້າຫ່ຽວແຫ້ງໄປແລະຄວາມງົດງາມຂອງມັນກໍສິ້ນສຸດໄປເຊັ່ນດຽວກັນ. ດັ່ງນີ້ລະຄົນຮັ່ງມີຈະເສື່ອມສູນໄປໃນຂະນະທີ່ເຂົາດຳເນີນງານຂອງເຂົາເໝືອນກັນ.

ຄຣິສຕຽນທີ່ຮັ່ງມີຈະມີປະຕິກິຣິຍາຢ່າງໃດຕໍ່ຄຳເວົ້າຢ່າງນີ້ຂອງຢາໂກໂບ? ບາງຄຣິສຕຽນທີ່ຮັ່ງມີໄດ້ຮັບຮອງໃຫ້ການຊ່ວຍເຫຼືອແກ່ຜູ້ທີ່ຂາດເຂີນແລະບາງຄົນກໍນຳເອົາຄວາມຮັ່ງມີຂອງເຂົາເຈົ້າຖວາຍເຂົ້າໃນພາຣະກິດຂອງພຣະຄຣິດ,ໃຫ້ການຊ່ວຍເຫຼືອແກ່ອົງການປ່າວປະກາດຂ່າວປະເສີດຂອງພຣະຄຣິດ, ສ້າງໂຮງພະຍາບານ, ແລະລ້ຽງອາຫານຄົນທີ່ຂາດທີ່ພັກພາອາສັຍ. ຢ່າງນີ້ທ່ານຄິດເຫັນວ່າຢ່າງໃດ, ດີບໍ່?

## 3. <u>ພຣະເຈົ້າເປັນພຣະເຈົ້າທີ່ດີຢູ່ທຸກເວລາ</u>. ຢາໂກໂບ 1:12-18

ຢາໂກໂບໄດ້ເລີ່ມຕົ້ນບອກວ່າການທົດລອງທຸກຢ່າງແມ່ນພຣະພອນຂອງພຣະເຈົ້າ. ພຣະເຈົ້າອວຍພອນແມ່ນຄວາມນິຍົມຊົມຊອບຂອງພຣະເຈົ້າແລະການເຕີບໃຫຍ່ຊີວິດຝ່າຍຈິດວິນຍານໃນທີ່ສຸດຈະເກີດມີຄວາມຊົມຊື່ນຍິນດີ. ອັນທີນຶ່ງທ່ານຢາໂກໂບບອກວ່າຜູ້ໃດມີຄວາມສຸກ; ຄົນທີ່ອົດທົນຕໍ່ການທົດລອງໃຈກໍເປັນສຸກ. ອັນທີສອງທ່ານຢາໂກໂບໄດ້ບອກວ່າດ້ວຍວິທີໃດລາວຈຶ່ງມີຄວາມສຸກ ເພາະເມື່ອປາກົດວ່າຜູ້ນັ້ນທົນໄດ້ແລ້ວກໍຈະໄດ້ຮັບພວງມະລັຍແຫ່ງຊີວິດ. ພຣະເຈົ້າຕ້ອງການຈະມອບພວງມະລັຍແຫ່ງຊີວິດໃຫ້ກັບຄຣິສຕຽນຜູ້ທີ່ມີຊັຍຊະນະໃນການດຳລົງຊີວິດ. (1ໂກຣິນໂທ 9:25; 2 ຕີໂມທຽວ 4:8; 1 ເປໂຕ 5:4; ພຣະນິມິດ 2:10 ). ມັນເປັນຄວາມຜິດຖ້າເວົ້າວ່າ ຂ້າພະເຈົ້າຖືກລໍ້ລວງໃຫ້ຫລົງໂດຍພຣະເຈົ້າ. "ຄຳອ້ອນວອນຂອງພຣະເຢຊູຄຣິດໄດ້ສອນພວກເຮົາໃຫ້ຂໍຕໍ່ພຣະເຈົ້າ, "ຢ່າໄດ້ພາພວກເຮົາເຂົ້າໄປໃນການທົດລອງ." (ມັດທາຍ 6:13) ແຕ່ນັ້ນແມ່ນການອະທິຖານໃຫ້ເຮົາຫລຸດພົ້ນໃນສະຖານະການອັນໃດອັນນຶ່ງ. ພຣະເຈົ້າຈະບໍ່ຊົງລໍ້ລວງໃຫ້ຜູ້ໃດຜູ້ນຶ່ງຫລົງຈັກເທື່ອ. ຄົນສູບຢາຜູ້ເມື່ອພົບວ່າຕົນເອງເປັນພະຍາດມະເຮັງໃນປອດລາວໄດ້ຮ້ອງໃຫ້ແລະຈົ່ມທຸກ, "ເປັນຫຍັງພຣະເຈົ້າບໍ່ຊ່ວຍຂ້ານ້ອຍແດ່?" ເຮົາມັກຈະກ່າວຫາພຣະເຈົ້າເມື່ອເຮົາຕົກຢູ່ໃນການທົດລອງ ນັ້ນເປັນການບໍ່ຖືກຕ້ອງ.

ພຣະຍາມານເປັນຜູ້ທົດລອງເຮົາ (ມັດທາຍ 4:1) ແຕ່ພຣະເຈົ້າບໍ່ຍອມໃຫ້ເຮົາຖືກການທົດລອງເກີນກວ່າເຮົາຈະທົນໄດ້ (1ໂກຣິນໂທ 10:13 ) ຢ່າເວົ້າວ່າ,"ພຣະຍາມານສັ່ງໃຫ້ທ່ານເຮັດ." ຢາໂກໂບໄດ້ເວົ້າວ່າຈົ່ງຕໍ່ສູ້ກັບມານແລ້ວມັນຈະໜີຈາກພວກເຈົ້າໄປ." (ຢາໂກໂບ 4:7 ) ເຮົາຖືກລວງໃຫ້ຫລົງຍ້ອນກິເລດຕັນຫາຂອງເຮົາເອງ.

ທ່ານຢາໂກໂບໄດ້ເຕືອນອີກວ່າພີ່ນ້ອງທີ່ຮັກເອີຍຢ່າໄດ້ຫລົງຜິດໄປໂດຍຄິດວ່າການທົດລອງໄດ້ເກີດມີຂຶ້ນມາຍ້ອນພຣະເຈົ້າເພາະວ່າພຣະເຈົ້າໄດ້ປະທານອັນດີທຸກຢ່າງແລະປະທານອັນດີເລີດທຸກຢ່າງແມ່ນມາຈາກທາງເທິງແລະລົງມາຈາກພຣະເຈົ້າ.ຖ້າແມ່ນອັນໃດດີແມ່ນມາຈາກພຣະເຈົ້າ.ຖ້າທຸກສິ່ງທີ່ມາຈາກພຣະເຈົ້າມັນກໍ່ເປັນສິ່ງທີ່ດີເລີດ.ເຮົາຈະຮູ້ໄດ້ດ້ວຍວິທີໃດ?ເຮົາສາມາດຮູ້ໄດ້ພຣະບິດາແຫ່ງຄວາມສະຫວ່າງນັ້ນດີກໍ່ເພາະວ່າໃນພຣະອົງນັ້ນບໍ່ມີການປ່ຽນແປງແລະບໍ່ມີເງົາເນື່ອງຈາກການຊົງໝູນວຽນ.ດັ່ງນັ້ນພວນເຮົາຈື່ງຮູ້ແລ້ວວ່າພຣະເຈົ້າໄດ້ປະທານແຕ່ສິ່ງດີໆໃຫ້ແກ່ເຮົາແລະຄວາມດີຂອງພຣະອົງເຮົາສາມາດເຫັນໄດ້ທຸກວັນທຸກເວລາ.ໂດຍນ້ຳພຣະທັຍຂອງພຣະອົງນັ້ນ ພຣະອົງຈື່ງຊົງບັນດານໃຫ້ພວກເຮົາບັງເກີດດ້ວຍພຣະທັມອັນສັດຈິງ.ພຣະອົງຕ້ອງການໃຫ້ພວກເຮົາເປັນຄົນບັງເກີດໃໝ່ໂດຍທາງຄວາມເຊື່ອໃນອົງພຣະເຢຊູຄຣິດ.

## <u>ບົດຮຽນແຫ່ງຊີວິດ</u>

ເຮົາສາມາດມີຄວາມຊົມຊື່ນຍິນດີໃນເມື່ອການທົດລອງນັ້ນເຮັດໃຫ້ຄວາມເຊື່ອຂອງເຮົາເຕີບໃຫຍ່. ສະຕິປັນຍາທີ່ມາຈາກພຣະເຈົ້າຈະຊ່ວຍໃຫ້ເຮົາເອົາຊະນະຕໍ່ການທົດລອງເໜືອກວ່າເງິນຄຳ, ແຕ່ຢ່າລືມເຮົາຕ້ອງຂໍການຊົງນຳຂອງພຣະເຈົ້າແລະຕັ້ງໝັ້ນໃນຄວາມເຊື່ອ. ຢ່າໃຫ້ເຮົາໄດ້ເວົ້າວ່າພຣະເຈົ້າໄດ້ລໍ້ລວງເຮົາ ສຳລັບພຣະເຈົ້າແລ້ວຂອງປະທານທຸກສິ່ງແມ່ນດີສຳລັບເຮົາ. ພວກເຮົາຈະມີທ່າທີແລະຕອບສນອງຕໍ່ການທົດລອງແບບໃດ, ໃນເມື່ອມັນເປັນການດີສຳລັບເຮົາແລະເປັນການໃຫ້ກຽດພຣະເຈົ້າ.

- ❖ ຜ່ານມາມີການທົດລອງອັນໃດແດ່ທີ່ນຳພຣະພອນມາສູ່ທ່ານ, ໃຫ້ທ່ານໃຊ້ເວລາຂອບຄຸນພຣະເຈົ້າຕໍ່ການປະທານສິ່ງທີ່ດີເລີດໃຫ້ແກ່ທ່ານ.
- ❖ ເວລານີ້ທ່ານໄດ້ພົບກັບການທົດລອງບໍ່? ທ່ານຈະມີຄວາມອົດທົນແລະເອົາຊະນະຕໍ່ການທົດລອງນັ້ນໄດ້ແບບໃດ?
- ❖ ຈົ່ງອະທິຖານຂໍສະຕິປັນຍາແລະການຊົງນຳຈາກພຣະເຈົ້າເມື່ອມີການທົດລອງແລະຈົ່ງມີໃຈກ້າຢູ່ສເມີ.
- ❖ ຢ່າລືມວ່າທຸກສິ່ງທີ່ມີຢູ່ນັ້ນແມ່ນມາຈາກນພຣະເຈົ້າ,ຈົ່ງຖວາຍຄືນໃຫ້ແກ່ພຣະອົງ, ຈົ່ງມີໃຈກວ້າງຂວາງຕໍ່ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອ.
- ❖ ຖ້າທ່ານມີຄວາມຂົມຂື່ນຫຼືໃຈຮ້າຍຕໍ່ພຣະເຈົ້າຍ້ອນບັນຫາຫຼືຄວາມບາບຂອງທ່ານ,ຈົ່ງສາລະພາບຕໍ່ພຣະເຈົ້າແລະຈົ່ງລຶບສິ່ງເຫຼົ່ານັ້ນໄປ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ <u>WWW.lsbf.org</u> ໂດຍLLBC.